# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 8 ຕຸລາ 2023 (10-8-2023)

## ກະກຽມສຳລັບການຕໍ່ສູ້

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຊົງເພີ່ມຄວາມເຂັ້ມແຂງໃຫ້ພວກເຮົາໃນຂນະທີ່ພວກເຮົາອະທິຖານແລະມີສ່ວນຮ່ວມໃນການຕໍ່ສູ້ດ້ານຈິດວິນຍານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນໂອກາດວັນຄຣິສມາດ, ປົກກະຕິແລ້ວພວກເຮົາຈະນຳເອົາຊຸດເຊຣາມິກ(ceramic)ການຊົງກຳເນີດຂອງພຣະເຍຊູທີ່ພັລຍາຂອງຂ້າພະເຈົ້າໄດ້ເຮັດຫຼາຍປີກ່ອນອອກມາຕັ້ງ. ຢູ່ທີ່ຝາເທິງຊຸດນັ້ນມີເທວະດາປີກໃຫຍ່ແຂວນຢູ່. ປົກກະຕິແລ້ວພວກເຮົາເຊື່ອມໂຍງບັນດາເທວະດາກັບວັນຄຣິສມາດ, ບໍ່ແມ່ນບໍ?

ແຕ່ທ່ານຈື່ໄດ້ບໍ່ສອງສາມປີກ່ອນ, ເມື່ອບັນດາເທວະດາເປັນເຣື່ອງວຸ້ນຕລອດປີ? ພວກເຮົາໄດ້ເຫັນພວກເທວະດາຢູ່ທາງໜ້າຂອງເສື້ອ, ເປັນຮູບປັ້ນຢູ່ເທິງຕູ້ໂຊແລະໂຕະ, ຫຼືຢູ່ໃນຮູບທີ່ຫ້ອຍຢູ່ເທິງຝາເຮືອນ. ບໍ່ວ່າພວກເຮົາຈະໄດ້ຮັບການສຳຜັດໂດຍເທວະດາອົງນຶ່ງ ຫຼືໄດ້ເຫັນເທວະດາອົງນຶ່ງຢູ່ໃນສນາມ, ບັນດາເທວະດາທັງຫຼາຍກໍຢູ່ທຸກຫົນທຸກແຫ່ງ. ໂດຍທົ່ວໄປແລ້ວ, ບັນດາເທວະດາຖືກເບິ່ງເຫັນວ່າເປັນນຶ່ງໃນສອງຈຸດສຸດຂີດຄື: ພວກເທວະດາເປັນ<u>ເດັກນ້ອຍເຄຣູບ</u> ມີປີກທີ່ມີໃບໜ້າທີ່ໄຮ້ດຽງສາແລະມີແສງຮຸ່ງສວ່າງ ຫຼືພວກເທວະດາເປັນ<u>ນັກຮົບທີ່ມີໄຟແຮງກ້າ</u>ຊຶ່ງເຝົ້າຄຸ້ມກັນເຮືອນ, ສະມາຊິກໃນຄອບຄົວ, ຫຼືສະຖານະການກູ້ພັຍ.

ແຕ່ພວກເຮົາສ່ວນໃຫຍ່ບໍ່ເຄີຍໄດ້ເຫັນເທວະດາທີ່ແທ້ຈິງ. ບໍ່ເປັນດັ່ງນັ້ນສຳລັບດານີເອນ. ໃນບົດຮຽນວັນນີ້, ລາວໄດ້ຜະເຊີນໜ້າກັບເທວະດາທີ່ແທ້ຈິງ. ເທວະດາໄດ້ເວົ້າກັບລາວກ່ຽວກັບເຫດການໃນອະນາຄົດ ລວມທັງການຂັດແຍ້ງທີ່ຍິ່ງໃຫຍ່. ໃນການສຶກສານີ້ນີ້, ພວກເຮົາສຸມໃສ່ການຂັດແຍ້ງທີ່ຍິ່ງໃຫຍ່ນັ້ນ ແລະເບິ່ງສິ່ງທີ່ມັນສາມາດສອນພວກເຮົາກ່ຽວກັບ<u>ການມີຊັຍຊນະໃນເວລາທີ່ພວກເຮົາປະເຊີນໜ້າກັບສົງຄາມຝ່າຍຈິດວິນຍານ</u> (spiritual warfare).

*ເມື່ອໃດທີ່ທ່ານໄດ້ມີຄວາມຮູ້ສຶກບໍ່ໄດ້ກະກຽມຫຍັງໝົດເລີຍ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

## ການສຶກສາພຣະຄັມພີ

### 1. <u>ດານີເອນ 10:1-3</u>

*[1]ໃນປີທີສາມແຫ່ງຣາຊການໄຊຣັດເປັນກະສັດແຫ່ງເປີເຊັຽນັ້ນໄດ້ມີການເປີດເຜີຍຖ້ອຍຄຳຈາກພຣະເຈົ້າໃຫ້ດານີເອນຮູ້ທາງນິມິດ (ດານີເອນ ມີຊື່ເອີ້ນອີກວ່າ ເບັນເຕຊັດຊາເຣ). ຖ້ອຍຄຳນັ້ນເປັນຄວາມຈິງແຕ່ເຂົ້າໃຈຍາກທີ່ສຸດ. [2]ໃນເວລານັ້ນຂ້າພະເຈົ້າດານີເອນໄດ້ໄວ້ທຸກຢູ່ເປັນເວລາສາມອາທິດ. [3]ຂ້າພະເຈົ້າບໍ່ໄດ້ກິນອາຫານແຊບຫລືຊີ້ນໃດໆ ບໍ່ໄດ້ດື່ມເຫຼົ້າອະງຸ່ນ ຫຼືບໍ່ໄດ້ທາວີຜົມຈົນກວ່າສາມອາທິດ.*

ການເຂົ້າໃຈໃນຊ່ວງເວລາໃນພຣະຄັມພີດານີເອນບົດທີ່ 10:1 ບໍ່ແມ່ນລາຍລະອຽດທີ່ບໍ່ສຳຄັນ. ດານີເອນໄດ້ດຳເນີນຊີວິດຢູ່ໃນສມັຍທີ່ອຸດົມສົມບູນທາງປວັດສາດບູຮານໃນພາກພື້ນໃກ້ຕາເວັນອອກ (ancient Near East).

- ປະມານ 100 ປີກ່ອນການເກີດຂອງລາວ, ຊົນຊາດອັດຊີເຣັຽໄດ້ເອົາຊະນະອິສຣາເອນ ແລະໄດ້ສະຖາປະນາຕົນເອງເປັນມະຫາອຳນາດທີ່ມີພລັງຍິ່ງໃຫຍ່ໃນພູມີພາກນັ້ນ. ດັ່ງນັ້ນ, ເມື່ອດານີເອນໄດ້ເກີດມາປະມານໃນປີ 520 ກ່ອນຄຣິສຈັກກະຣາດ, ອານາ

ຈັກຢູດາໄດ້ຢູ່ພາຍໃຕ້ອຳນາດຂອງອັດຊີເຣັຽ.

- ຊາວບາບີໂລນໄດ້ຂຶ້ນກຳອຳນາດ. ໃນປີ 605 ກ່ອນ ຄສ, ຊາວບາບີໂລນໄດ້ລຸກຂຶ້ນເປັນອຳນາດ. ພວກເຂົາໄດ້ເອົາຊະນະອັດຊີເຣັຽແລະດິນແດນທີ່ຍຶດຄອງ, ຮວມທັງຢູດາແລະເຢຣູຊາເລັມ. ໃນເວລານັ້ນ, ດານີເອນແລະບັນດາໝູ່ເພື່ອນຂອງລາວ: ແຊດແຣັດ (Shadrach), ເມແຊັຄ (Meshach), ແລະ ອາເບດເນໂກ (Abednego), ຍັງຢູ່ໃນວັຍໜຸ່ມຂອງພວກເຂົາເຈົ້າ ໄດ້ຖືກຈັບໄປເປັນຊະເລີຍທີ່ກຸງບາບີໂລນ. ຢູ່ທີ່ນັ້ນພວກເຂົາເຈົ້າໄດ້ຮັບໃຊ້ຢູ່ໃນຣາຊວັງຂອງກະສັດ.
- ໃນປີ 539 ກ່ອນ ຄສ, ດານີເອນຊຶ່ງມີອາຍຸເກີນກວ່າ 80 ປີ ແລະອາດຈະໄດ້ຮັບໃຊ້ເປັນຣັຖມົນຕຣີອາວຸໂສບຳນານ, ໄດ້ຖືກເອີ້ນໃຫ້ຕີຄວາມໝາຍລາຍມືຂຽນໄວ້ເທິງຝາຢູ່ໃນງານລ້ຽງຂອງເບນຊັດຊາເຣ. ໃນຄືນນັ້ນເອງຊາວເປີເຊັຽໄດ້ຍຶດຄອງກຸງບາບີໂລນ.

ຫຼາຍປີຕໍ່ມາ, ກະສັດໄຊຣັສຂອງເປີເຊັຽໄດ້ອອກຄຳສັ່ງອະນຸຍາດໃຫ້ບັນດາຊະເລີຍກັບໄປຍັງບ້ານເກີດເມືອງນອນຂອງຕົນ ຮວມທັງຊົນຊາດເຮັບເຣີດ້ວຍ. ຄື້ນທຳອິດຂອງບັນດາຊາວຢິວທີ່ໄດ້ຖືກເນລະເທດໄດ້ກັບຄືນມາຍັງອິສຣາເອນ. ການກໍ່ສ້າງໄດ້ເລີ້ມຂຶ້ນທັນທີທັນໃດເທິງຮາກຖານຂອງພຣະວິຫານເຢຣູຊາເລັມ. ຢ່າງໃດກໍຕາມ, ດານີເອນຍັງຄົງຢູ່ໃນກຸງບາບີໂລນ. ນອກຈາກຄວາມເປັນຫ່ວງກັງວົນກັບຄວາມຕ້ອງການຝ່າຍຮ່າງກາຍຂອງການເດີນທາງດັ່ງກ່າວ, ດານີເອນອາດໄດ້ຄິດວ່າລາວຄົງຈະມີຄຸນຄ່າທີ່ນະຄອນບາບີໂລນຫຼາຍກວ່າທີ່ເມືອງເຢຣູຊາເລັມ. ດັ່ງນັ້ນ, ດານີເອນໄດ້ດຳເນີນຊີວິດຢູ່ພາຍໃຕ້ກົດລະບຽບຂອງອັດຊີເຣັຽ, ຂອງບາບີໂລນ, ແລະຂອງເປີເຊັຽ. ລາວໄດ້ເຫັນກະສັດແລະອານາຈັກຮຸ່ງເຮືອງແລະຫຼົ້ມສລາຍລົງ. ລາວຕ້ອງໄດ້ອົດທົນຕໍ່ຄວາມຂັດແຍ່ງແລະການປາບປາມ. <u>ສິ່ງທີ່ພຣະເຈົ້າໄດ້ຊົງເປີດເຜີຍໃນວິສັຍທັດນີ້, ແມ່ນ **"ຄວາມຂັດແຍ່ງອັນໃຫຍ່ຫຼວງ"** ທີ່ຈະມາເຖິງ</u>.

*ເມື່ອໃດທີ່ທ່ານໄດ້ຮັບກຳລັງໃຈຈາກຄົນທີ່ຕອບຮັບຂ່າວບໍ່ດີ?*

## 2. ດານີເອນ 10:10-13

*[10]ແລ້ວມີຄົນນຶ່ງມາໂຊມຂ້າພະເຈົ້າໃຫ້ລຸກຂຶ້ນໂດຍຊູຫົວເຂົ່າແລະມືຂອງຂ້າພະເຈົ້າຂຶ້ນ ແຕ່ຂ້າພະເຈົ້າກໍຍັງຕົວສັ່ນຢູ່. [11]ຄົນນັ້ນໄດ້ເວົ້າກັບຂ້າພະເຈົ້າວ່າ, "ດານີເອນເອີຍພຣະເຈົ້າຊົງຮັກເຈົ້າ ຈົ່ງຢືນຂຶ້ນແລະຕັ້ງໃຈຟັງສິ່ງທີ່ເຮົາຈະເວົ້າ. ພຣະເຈົ້າໄດ້ຊົງໃຊ້ໃຫ້ເຮົາມາຫາເຈົ້າ" ເມື່ອເພິ່ນເວົ້າດັ່ງນີ້ແລ້ວຂ້າພະເຈົ້າກໍລຸກຢືນຂຶ້ນແຕ່ຕົວກໍຍັງສັ່ນຢູ່. [12]ຕໍ່ມາເພິ່ນໄດ້ເວົ້າຕໍ່ໄປວ່າ, "ດານີເອນເອີຍ ຢ່າສູ່ຢ້ານກົວເລີຍ". ນັບແຕ່ມື້ທຳອິດທີ່ເຈົ້າຕັດສິນໃຈຖ່ອມຕົວລົງອ້ອນວອນອະທິຖານ ແລະຂໍຄວາມເຂົ້າໃຈຕໍ່ໜ້າພຣະເຈົ້າຂອງເຈົ້າ, ພຣະອົງໄດ້ຊົງຮັບຟັງຄຳອ້ອນວອນຂອງເຈົ້າແລ້ວ. ເຮົາມາກໍເພື່ອຕອບຄຳອະທິຖານອ້ອນວອນຂອງເຈົ້ານັ້ນ. [13]ເທວະດາຕົນທີ່ພິທັກຮັກສາ ຣາຊອານາຈັກເປີເຊັຽໄດ້ຂັດຂວາງເຮົາເປັນເວລາຊາວເອັດມື້. ແລ້ວມີຄາເອນ ເທວະດາຊັ້ນຫົວໜ້າຕົນນຶ່ງໄດ້ມາຊ່ອຍເຮົາ ເພາະເຮົາຜູ້ດຽວທີ່ຍັງເຫຼືອຢູ່ໃນຣາຊອານາຈັກເປີເຊັຽ.*

ໃນຂນະທີ່ດານີເອນໄດ້ຢູ່ຮີມຝັ່ງແມ່ນ້ຳໄທກຣິສ, ໄດ້ມີຄົນປາກົດຕົວໃນຮ່າງຜູ້ຊາຍທີ່ນຸ່ງຜ້າປ່ານສີຂາວ. ເຖິງແມ່ນວ່ານີ້ແມ່ນເຄື່ອງນຸ່ງຫົ່ມທີ່ບັນດາພວກປະໂລຫິດນຸ່ງ(ລລວ 6:10), ພຣະຄັມພີໄດ້ບັນລະຍາຍບັນດາພວກເທວະດາສວມຊຸດຜ້າປ່ານສີຂາວນີ້ (ອສກ 10:2; ພນມ 15:6). ມີພຽງດານີເອນເທົ່ານັ້ນທີ່ໄດ້ເຫັນສິ່ງທີ່ມີຢູ່, ຊຶ່ງເຫັນໄດ້ຊັດວ່າໄດ້ລອຍຢູ່ເທິງແມ່ນ້ຳ. (ດນອ 10:4-6; 12:5-6). ປະສົບການຂອງດານີເອນນີ້ ສາມາດເປັນຄຳແນະນຳໃຫ້ພວກເຮົາໄດ້ ເມື່ອພວກເຮົາພົບເຫັນຕົວເອງໃນເວລາທີ່ເກີດຄວາມຂັດແຍ່ງກັນຢ່າງໃຫຍ່ຫຼວງ, ຮວມທັງສົງຄາມດ້ານຈິດວິນຍານ. <u>ສາກ</u> (scene) <u>ນີ້ສອນຫຍັງແກ່ພວກເຮົາກ່ຽວກັບສົງຄາມດ້ານຈິດວິນຍານ</u>?

- **ສົງຄາມດ້ານຈິດວິນຍານມີຈິງ.** ປະສົບການຂອງດານີເອນໄດ້ດຶງຜ້າກັ້ງຄືນມາບາງສ່ວນ ແລະເຮັດໃຫ້ພວກເຮົາສາມາດເຫັນເຂດທີ່ເບິ່ງບໍ່ເຫັນໄດ້. ນີ້ (ອີກເທື່ອນຶ່ງ, ອາດຈະເປັນ ຄັບຣີເອນ ໃນດານີເອນ 10:10) ໄດ້ມີສ່ວນຮ່ວມໃນການສູ້ຮົບ "ເຈົ້ານາຍຂອງອານາຈັກເປີເຊັຽ"-ການສູ້ຮົບທີ່ລາວຈະດຳເນີນຄືນໃໝ່ຫຼັງຈາກທີ່ລາວລຳເລັດການສົ່ງຂໍ້ຄວາມຂອງດານີເອນ (ຂໍ້ທີ່ 20). ອັຄສາວົກໂປໂລໄດ້ເວົ້າເຖິງສົງຄາມດ້ານຈິດວິນຍານລະຫວ່າງບັນດາຜູ້ທີ່ເຊື່ອ ແລະບັນດາຜູ້ທີ່ຕໍ່ຕ້ານພຣະເຈົ້າ (ອຟຊ 6:12). <u>ສົງຄາມດ້ານຈິດວິນຍານຍັງມີຢູ່ໃນປັດຈຸບັນນີ້</u>.

- **ອີກເທື່ອນຶ່ງ, ລະຍະເວລາແມ່ນສຳຄັນ.** ລູກຫຼານຂອງອິສຣາເອນໄດ້ກັບຄືນໄປບ້ານເກີດເມືອງນອນຂອງເຂົາເຈົ້າຄວນຈະເປັນເວລາທີ່ມີຄວາມສຸກທີ່ຍິ່ງໃຫຍ່ແລະສຳເລັດ. ແຕ່ຄວາມຂັດແຍ່ງກໍບໍ່ໄດ້ລົດລົງແຕ່ຢ່າງໃດ. ດານີເອນຍັງກັງວົນຢູ່ສເມີວ່າຈະມີຫຍັງເກີດຂຶ້ນກັບປະຊາຊົນຂອງລາວ (ດນອ 10:14).
- **ພຣະເຈົ້າບໍ່ໄດ້ຊົງປ່ອຍປະພວກເຮົາໃນເມື່ອພວກເຮົາຢູ່ໃຕ້ການໂຈມຕີດ້ານຈິດວິນຍານ.** ໃນເມື່ອດານີເອນພົບວ່າຕົວເອງມີພາລະໜັກໃຈແລະເຕັມໄປດ້ວຍຄວາມກັງວົນພຣະເຈົ້າກໍຊົງຕອບ. ສົງຄາມດ້ານຈິດວິນຍານຂອງພວກເຮົາບໍ່ໄດ້ໝາຍຄວາມວ່າພຣະເຈົ້າຊົງຫັນຫຼັງໜີຈາກພວກເຮົາ. ພຣະເຈົ້າມີພຣະປະສົງທີ່ຈະຊົງເຮັດວຽກແທນພວກເຮົາໃນເມື່ອພວກເຮົາຖືກໂຈມຕີ.
- **ຄຳອະທິຖານແລະພຣະທັມຂອງພຣະເຈົ້າແມ່ນການປ້ອງກັນທີ່ດີທີ່ສຸດສອງຢ່າງໃນເມື່ອພວກເຮົາຢູ່ໃຕ້ການໂຈມຕີ (ອຟຊ 6:17-18).** ດານີເອນໄດ້ອ້ອນວອນອະທິຖານເປັນເວລາ 3 ອາທິດ. ພຣະເຈົ້າຊົງໄດ້ຍິນດານີເອນວັນແລກທີ່ລາວເລີ່ມຕົ້ນອະທິຖານ, ແລະພຣະອົງໄດ້ຊົງສົ່ງທູດສວັນທີ່ມີອຳນາດຂອງພຣະອົງໃນການຕອບສນອງ.

ໃນເວລາແຫ່ງ<u>ສົງຄາມດ້ານຈິດວິນຍານ</u>ຂອງພວກເຮົາ, ພວກເຮົາຈຳເປັນຕ້ອງໃຊ້ພຣະຄຳ(**Word**)ຂອງພຣະເຈົ້າໂດຍກ່າວພຣະຄຳນັ້ນໂດຍກົງຕໍ່ສັດຕູແລະກອງທັບຂອງພວກມັນ. ໂດຍທາງນັ້ນ, ພວກເຮົາຕໍ່ຕ້ານພະຍາມານແລະມັນຈະໜີໄປ (ຢກບ 4:7).

*ແມ່ນຫຍັງຄືບົດບາດຂອງການອະທິຖານໃນສົງຄາມດ້ານຈິດວິນຍານ?*

## 3. <u>ດານີເອນ 10:16-19</u>

*16 ແລ້ວເທວະດາຕົນນຶ່ງຊຶ່ງມີຮູບຮ່າງເໝືອນມະນຸດກໍເດ່ມືອອກມາບາຍຮີມສົບຂອງຂ້າພະເຈົ້າ. ຂ້າພະເຈົ້າຈຶ່ງເວົ້າກັບເພິ່ນຊຶ່ງຢືນຢູ່ຕໍ່-*
*ໜ້າວ່າ, "ນາຍເອີຍ ນິມິດນີ້ເຮັດໃຫ້ຂ້ານ້ອຍອ່ອນແຮງຫຼາຍຈົນຂ້ານ້ອຍບໍ່ເຊົາສັ່ນເຊັນ. 17 ຂ້ານ້ອຍເປັນເໝືອນຂ້າທາດຄົນນຶ່ງທີ່ຢືນຢູ່*
*ຕໍ່ໜ້ານາຍຂອງຕົນ. ຂ້ານ້ອຍຈະເວົ້າກັບທ່ານໄດ້ຢ່າງໃດ? ຂ້ານ້ອຍບໍ່ມີແຮງ ຫລືມີລົມຫາຍໃຈເຫລືອຢູ່ໃນຕົວເລີຍ." 18 ແລ້ວເພິ່ນໄດ້*
*ຈັບບາຍຂ້າພະເຈົ້າອີກເທື່ອນຶ່ງ ຂ້າພະເຈົ້າຈຶ່ງຮູ້ສຶກມີແຮງຂຶ້ນ. 19 ເພິ່ນໄດ້ເວົ້າວ່າ, "ພຣະເຈົ້າຊົງຮັກແພງເຈົ້າ. ດັ່ງນັ້ນຢ່າໃຫ້ສິ່ງໃດເຮັດ*
*ໃຫ້ເຈົ້າອຸກໃຈຫລືຢ້ານເດີ້ ຈົ່ງກ້າຫານສາ." ເມື່ອເພິ່ນກ່າວດັ່ງນີ້ແລ້ວ, ຂ້າພະເຈົ້າກໍຮູ້ສຶກມີແຮງແລະເວົ້າວ່າ, "ນາຍເອີຍຈົ່ງບອກສິ່ງທີ່*
*ທ່ານຈະຕ້ອງເວົ້ານັ້ນສູ່ຂ້ານ້ອຍຟັງແດ່. ທ່ານໄດ້ເຮັດໃຫ້ຂ້ານ້ອຍມີແຮງຂຶ້ນແດ່ແລ້ວ."*

ວິສັຍທັດຂອງສົງຄາມໄດ້ຄອບງຳດານີເອນ. ລາວໄດ້ຜ່ານຜ່າຄວາມໂສກເສົ້າ ໂດຍໄດ້ເຫັນບັນຫາທີ່ຈະກະທົບຕໍ່ໂລກໃນອະນາຄົດ. ໂດຍການປາກົດຕົວໃນນາມມະນຸດກ່ອນໜ້ານັ້ນຕໍ່ດານີເອນ, ທູດສວັນ ຄັບຣິເອນສືບຕໍ່ປອບໂຍນຜູ້ທຳນວາຍທີ່ອິດເມື່ອຍ. ທູດສວັນໄດ້ຢູ່ທີ່ນັ້ນເພື່ອເສີມສ້າງດານີເອນແລະຕີຄວາມໝາຍສິ່ງທີ່ລາວໄດ້ເຫັນ.

*ການຮູ້ວ່າພຣະເຈົ້າຊົງເຫັນຄຸນຄ່າຂອງທ່ານຈະຊ່ວຍທ່ານໄດ້ແນວໃດ?*

ທູດສວັນຄັບຣິເອນແຕະຕ້ອງດານີເອນ, ຊຶ່ງໄດ້ຟື້ນຟູຄວາມສາມາດໃນການເວົ້າຂອງຜູ້ເຜີຍພຣະຄຳໃນເວລາທີ່ລາວໄດ້ຢືນຢູ່ຕໍ່ໜ້າກະສັດ. ຖ້ອຍຄຳຂອງດານີເອນໄດ້ເປີດເຜີຍໃຫ້ເຫັນ<u>ທັສນະຄະຕິທີ່ສອດຄ່ອງກັບຄວາມຖ່ອມຕົວ</u>. ທູດສວັນຄັບຣິເອນໄດ້ແຕະຕ້ອງດານີເອນເຖິງ 3 ຄັ້ງ. ການແຕະຕ້ອງຄັ້ງທີ່ສາມນີ້ໄດ້ເຮັດໃຫ້ດານີເອນມີຄວາມກ້າຫານ. ສິ່ງນີ້ຄວນຈະໃຫ້ຄວາມກ້າຫານແກ່ພວກເຮົາເໝືອນກັນໃນເວລາທີ່ພວກເຮົາເຫັນວ່າຕົວເຮົາເອງອ່ອນແອໂດຍຂ່າວທີ່ບໍ່ດີ, ແລະໂດຍສົງຄາມຝ່າຍຈິດວິນຍານ. <u>ເປັນດ້ວຍເຫດໃດ</u>?

1. ດັ່ງທີ່ໄດ້ເກີດຂຶ້ນກັບບັນດາພວກອັຄສາວົກທີ່ຢ້ານກົວໃນຄືນນຶ່ງທີ່ມີລົມພາຍຸຢູ່ໃນທະເລຄາລິເລ, ພວກເຮົາຕ້ອງຍອມໃຫ້ຕົວເອງໄດ້ຍິນສຽງທີ່ບັນດາຊາວຄາລິເລເວົ້າໃນເວລາທີ່ພວກເຮົາປະສົບກັບຄວາມຢ້ານກົວ: *"ແມ່ນເຮົາເອງ. ຢ່າສູ່ຢ້ານ"* (ຢຮ 6:20).
2. **ພວກເຮົາຈຳເປັນຕ້ອງເຕືອນຕົວເອງວ່າພຣະເຈົ້າຊົງເຫັນຄຸນຄ່າຂອງເຮົາດ້ວຍ.** ພຣະເຈົ້າໄດ້ຊົງສົ່ງທູດສວັນເພື່ອສົ່ງຂ່າວສານແລະເພື່ອເສີມພະລັງແກ່ປະຊາກອນຂອງພຣະອົງໃນສມັຍພຣະສັນຍາເດີມ. ສຳລັບພວກເຮົາ, ພຣະອົງໄດ້ຊົງສົ່ງພຣະບຸດອົງດຽວຂອງພຣະອົງຊຶ່ງໄດ້ຊົງຈ່າຍລາຄາສູງສຸດ, <u>ເພື່ອໃຫ້ພວກເຮົາໄດ້ເປັນສ່ວນນຶ່ງຂອງຄອບຄົວຂອງພຣະອົງເຊັ່ນດຽວກັນ</u>.

3. **ພຣະເຈົ້າມີພຣະປະສົງໃຫ້ພວກເຮົາມີປະສົບການຄວາມສັນຕິສຸກ.** ຜູ້ປະກາດພຣະທັມ ເອຊາຢາໄດ້ທຳນວຍວ່າພຣະເມຊີອາຈະຊົງສະເດັດມາໃນນາມ "ອົງສັນຕິຣາດ"-(**ອຊຢ** 9:6). ສັນຕິສຸກແມ່ນຄວາມສງົບພາຍໃນທີ່ເກີດຂຶ້ນໂດຍຜ່ານການຊົງສະຖິດຢູ່ຂອງພຣະຄຣິດ ໃນນາມອົງພຣະວິນຍານບໍຣິສຸດເທົ່ານັ້ນ ແລະຊົງສະຖິດຢູ່ໃນບັນດາຜູ້ທີ່ເຊື່ອເທົ່ານັ້ນ.
4. **ພວກເຮົາບໍ່ຕ້ອງອີງໃສ່ຄວາມເຂັ້ມແຂງຂອງຕົນເອງ.** ພວກເຮົາສາມາດເພິ່ງພາໃນພຣະອຳນາດຂອງພຣະເຈົ້າ ແທນທີ່ຈະອີງໃສ່ກຳລັງຂອງຕົນເອງໃນຊ່ວງເວລາແຫ່ງຄວາມວຸ້ນວາຍ ແລະຊ່ວງເວລາຂອງສົງຄາມຝ່າຍຈິດວິນຍານ. **ພຣະເຈົ້າຊົງສັດຊື່ສເມີໄປ.**

ຂໍ້ຄວາມຂອງດານີເອນແມ່ນວ່າ ພຣະເຈົ້າຊົງຢູ່ໃນການຄວບຄຸມຂອງປວັດສາດ. ເຖິງແມ່ນວ່າຈະມີສະຖານະການຊົ່ວຮ້າຍໃນປັດຈຸບັນ, ທຸກຢ່າງກັບກາຍເປັນທີ່ຖືກຕ້ອງໃນບັ້ນປາຍ. ພວກເຮົາທີ່ຢູ່ຟາກນີ້ຂອງການຄືນພຣະຊົນ ຮັບຮູ້ວ່າພຣະອຳນາດຂອງພຣະເຈົ້າທີ່ມີຢູ່ເໜືອສັດຕູໄດ້ຖືກຊົງສະແດງໃຫ້ເຫັນໃນທີ່ສຸດ ໃນວຽກງານຂອງພຣະຄຣິດເທິງໄມ້ກາງແຂນ. **ສັດຕູໄດ້ພ່າຍແພ້, ແລະໃນພຣະນາມຂອງພຣະຄຣິດ, ພວກເຮົາມີຊັຍຊະນະ.**

*ມີວິທີໃດແດ່ທີ່ພຣະເຈົ້າຊົງເສີມກຳລັງໃຫ້ພວກເຮົາສຳລັບການສູ້ຮົບທາງຝ່າຍວິນຍານ?*

## ນຳໃຊ້ໃນຊີວິດ

ພຣະເຈົ້າຊົງເພີ້ມຄວາມເຂັ້ມແຂງໃຫ້ພວກເຮົາໃນຂນະທີ່ພວກເຮົາອະທິຖານແລະມີສ່ວນຮ່ວມໃນການຕໍ່ສູ້ດ້ານຈິດວິນຍານ. ຈົ່ງໃຊ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຍ້ອນຄືນຫຼັງ.** ເວລາສຳລັບການກະກຽມສົງຄາມແມ່ນເວລາກ່ອນທີ່ພວກເຮົາຈະຖືກໂຈມຕີ. ຈົ່ງຈົດບັນທຶກຂໍ້ພຣະຄັມພີທີ່ໃຫ້ຄວາມກ້າຫານແລະການຮັບປະກັນສຳລັບເວລາທີ່ຫຍຸ້ງຍາກ. ຈົ່ງຮັກສາບັນຊີພຣະຄັມພີນັ້ນໄວ້ໃກ້ໆທ່ານ, ເພື່ອຈະໄດ້ດຶງອອກມາໃຊ້ໃນເວລາທີ່ທ່ານຕ້ອງການ.
- **ຈົ່ງຕ້ານທານ.** ພຣະເຢຊູໄດ້ຊົງອ້າງເຖິງພຣະຄັມພີໃນເວລາທີ່ພຣະອົງໄດ້ຖືກລໍ້ລວງ. ຈົ່ງຈື່ຈຳບາງຂໍ້ພຣະຄັມພີຢູ່ໃນບັນຊີຂອງທ່ານເພື່ອວ່າທ່ານຈະພ້ອມທີ່ຈະອ້າງເຖິງຂໍ້ຄວາມເຫຼົ່ານັ້ນໃນເວລາທີ່ທ່ານຮູ້ສຶກວ່າຖືກໂຈມຕີທາງຈິດວິນຍານ.
- **ຈົ່ງອ່ານ.** ຈົ່ງຊອກຫາປຶ້ມທີ່ດີທີ່ເວົ້າເຖິງສົງຄາມດ້ານຈິດວິນຍານຊຶ່ງຖືກຂຽນໂດຍຜູ້ຂຽນຄຣິສຕຽນທີ່ເຂັ້ມແຂງ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງເວົ້າກັບທ່ານຜ່ານທາງປຶ້ມເຫຼົ່ານີ້ ແລະຊົງໃຫ້ພະລັງແກ່ທ່ານດ້ານຈິດວິນຍານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ** SSK